STAY SAFE MN

# ພາບລວມຂອງການກວດຫາເຊື້ອໂຄວິດ-19 ແບບດ່ວນທີ່ໃຊ້ໃນຄົວເຮືອນ: QuickVue

**ຈຸດທີ່ຮັບເອົາຊຸດກວດແບບດ່ວນທີ່ນຳໃຊ້ໃນຄົວເຮືອນແມ່ນຫຍັງ?**

ເພື່ອຊ່ວຍຮັກສາສຸຂະພາບ ແລະ ຫຼຸດຜ່ອນການແຜ່ລະບາດຂອງພະຍາດໂຄວິດ-19 ຂອງຊຸມຊົນທ່ານ, ພະແນກ ສາທາລະນະສຸກລັດມິນນີໂຊຕ້າ (MDH) ໄດ້ມີການຮ່ວມມືກັບຕົວແທນສາທາລະນະສຸກທ້ອງຖິ່ນ, ຜູ້ນຳດ້ານສຸຂະພາບຂອງຊົນເຜົ່າ, ຊັ້ນວາງອາຫານ ແລະ ອົງການຈັດຕັ້ງຊຸມຊົນ ເພື່ອສະໜອງຊຸດກວດແບບດ່ວນໂດຍບໍ່ເສຍຄ່າໃຊ້ຈ່າຍ ໃຫ້ແກ່ຊາວເມືອງມິນນີໂຊຕ້າຢູ່ຈຸດຮັບທີ່ໄດ້ກຳນົດໄວ້.

**ຊຸດກວດສານກະຕຸ້ນການສ້າງພູມຕ້ານທານແບບດ່ວນ QuickVue ແມ່ນຫຍັງ?**

ຊຸດກວດສານກະຕຸ້ນການສ້າງພູມຕ້ານທານແບບດ່ວນ QuickVue ຊ່ວຍໃນການກວດຈັບເຊື້ອໄວຣັສທີ່ກໍ່ໃຫ້ເກີດໂຄວິດ-19. ຖ້າທ່ານມີອາການ, ການກວດສາມາດບອກໄດ້ຢ່າງວ່ອງໄວວ່າທ່ານເປັນໂຄວິດ-19 ຫຼືບໍ່. ທ່ານສາມາດເຮັດການກວດໂດຍການຄັວດຮູດັງໄດ້ຢູ່ທຸກບ່ອນ ແລະ ໄດ້ຮູ້ຜົນກວດພາຍໃນ 10 ນາທີ.

**ຂ້ອຍຄວນຈະໃຊ້ເຄື່ອງກວດ QuickVue ຂອງຂ້ອຍໄດ້ເມື່ອໃດ?**

ທ່ານສາມາດໃຊ້ຊຸດກວດ QuickVue ກັບສະມາຊິກໃນຄົວເຮືອນຂອງທ່ານຜູ້ທີ່ມີອາຍຸ 2 ປີ ຂຶ້ນໄປໄດ້ຕະຫຼອດເວລາ. ພະແນກສາທາລະນະສຸກລັດມິນນີໂຊຕ້າ ແນະນຳໃຫ້ມີການກວດ ເມື່ອມີເຫດການດັ່ງຕໍ່ໄປນີ້:

- ທ່ານຮູ້ສຶກວ່າມີອາການໂຄວິດ-19;
- ທ່ານໄດ້ໃກ້ຊິດກັບຄົນທີ່ເປັນໂຄວິດ-19;
- ທ່ານອາດໄດ້ສຳຜັດກັບຄົນທີ່ເປັນໂຄວິດ-19;
- ທ່ານກຳລັງກວດກ່ອນຈະເຂົ້າຮ່ວມງານລ້ຽງທີ່ມີຄົນຈຳນວນຫຼາຍ.

ຖ້າທ່ານໄດ້ກວດແຕ່ວ່າບໍ່ມີອາການ, ກະລຸນາເບິ່ງຄຳແນະນຳຂອງຊຸດ QuickVue, ຫຼື ຄູ່ມືແນະນຳໃນການກັກຕົວຂອງພະແນກສາທາລະນະສຸກລັດມິນນີໂຊຕ້າ: https://www.health.state.mn.us/diseases/coronavirus/guidefaith.pdf.

**ຂ້ອຍໃຊ້ຊຸດກວດໄດ້ແນວໃດ?**

ຊຸດກວດ QuickVue ດຳເນີນການໄດ້ຫ້າຂັ້ນຕອນ. **ກະລຸນາປະຕິບັດຕາມຄຳແນະນຳທຸກຂັ້ນຕອນທີ່ລະບຸໄວ້ຢູ່ໃນກ່ອງຂອງຊຸດກວດ.** ເພື່ອເບິ່ງວິທີການເຮັດວຽກຂອງຊຸດກວດ, ທ່ານສາມາດເບິ່ງວິດີໂອນີ້: https://quickvueathome.com/#video_testkit-2.

**ຈະເປັນແນວໃດ ຖ້າວ່າຂ້ອຍມີອາການແຕ່ຜົນກວດດ້ວຍເຄື່ອງ QuickVue ມີຜົນເປັນລົບ?**

ເຖິງແມ່ນວ່າຜົນກວດແບບດ່ວນນີ້ຈະມີຜົນເປັນລົບ, ຜູ້ທີ່ມີອາການຄວນຈະໃຊ້ການກວດຫາເຊື້ອໂຄວິດ-19 ດ້ວຍ PCR ແລະ ບໍ່ຄວນຈະກັບໄປເຮັດກິດຈະກຳທີ່ເຮັດປົກກະຕິຈົນກວ່າອາການຈະດີຂຶ້ນເປັນເວລາ 24 ຊົ່ວໂມງ. ຄົ້ນຫາທາງເລືອກຂອງການ ກວດດ້ວຍ PCR ໄດ້ທີ່ mn.gov/covid19. ຖ້າທ່ານມີຄຳຖາມກ່ຽວກັບອາການຂອງທ່ານ, ຕິດຕໍ່ຫາທ່ານໝໍ ຫຼື ຜູ້ສະໜອງການປິ່ນປົວສຸຂະພາບຂອງທ່ານ.

**ຈະເປັນແນວໃດ ຖ້າຂ້ອຍກວດດ້ວຍຊຸດ QuickVue ແລະ ມີຜົນເປັນບວກ?**

ຖ້າທ່ານມີຜົນກວດເປັນບວກ, ໃຫ້ພັກຢູ່ເຮືອນ ແລະ ຢູ່ຫ່າງຈາກຄົນອື່ນ. ຖ້າທ່ານມີອາການ, ຕິດຕໍ່ຫາທ່ານໝໍ ຫຼື ຜູ້ສະໜອງການປິ່ນປົວສຸຂະພາບຂອງທ່ານ. ປະຕິບັດຕາມຄູ່ມືແນະນຳຂອງສາທາລະນະສຸກໄດ້ ທີ່ນີ້: https://www.health.state.mn.us/diseases/coronavirus/materials/index.html.

**ຂ້ອຍຈະເຮັດແນວໃດຖ້າຂ້ອຍມີຄຳຖາມ?**

ກະລຸນາໂທຫາສາຍດ່ວນໂຄວິດ-19 ຂອງພະແນກ ສາທາລະນະສຸ ລັດມິນນີໂຊຕ້າ ທີ່ 1-833-431-2053, ເປີດບໍລິການ ວັນຈັນ ເຖິງ ວັນສຸກນັ ບແຕ່ເວລາ 9 ໂມງເຊົ້າ ຫາ 7 ໂມງແລງ, ແລະ ວັນເສົາ ນັບແຕ່ເວລາ 10 ໂມງເຊົ້າ ຫາ 6 ໂມງແລງ